*Souphanouvong University Journal of Multidisciplinary Research and Development*
2024, Vol.9. No. 329-337
https://doi.org/10.69692/SUJMRD0901329

# ປັດໄຈທີ່ເປັນບັນຫາຕໍ່ການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ທີ່ ເມືອງໂພນທອງ ແຂວງຫຼວງພະບາງ

**ສົມໝາຍ ສີລີວັນ[1], ກິນນາລີ ທິບພະພອນ[2], ຄຳຊາຍ ຈັນທະທິງ[2], ໄຊພອນ ຄົດໄຊໂຍ[2], ຈັນເພັງ ວົງວິໄລ[2]**

*ຫ້ອງການຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການ, ມະຫາວິທະຍາໄລ ສຸພານຸວົງ, ສປປ ລາວ*

[1] ***ຕິດຕໍ່ພົວພັນ:*** *ສົມໝາຍ ສີລີວັນ, ຫ້ອງການຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການ, ມະຫາວິທະຍາໄລ ສຸພານຸວົງ, ເບີໂທ: +856 20 2235 0136, ອີເມວ:* s.silivanh@su.edu.la

[2] *ຄະນະສຶກສາສາດ, ມະຫາວິທະຍາໄລ ສຸພານຸວົງ*

***ຂໍ້ມູນບົດຄວາມ:***
*ການສົ່ງບົດ: 11 ມັງກອນ 2023*
*ການປັບປຸງ: 15 ມີນາ 2023*
*ການຕອບຮັບ: 27 ມີນາ 2023*

**ບົດຄັດຫຍໍ້**

ການຄົ້ນຄວ້າຄັ້ງນີ້ ແມ່ນຄົ້ນຄວ້າກ່ຽວກັບ ປັດໄຈທີ່ເປັນບັນຫາຕໍ່ການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ທີ່ ເມືອງ ວຽງຄຳ ແຂວງ ຫຼວງພະບາງ, ໂດຍມີຈຸດປະສົງ ຄື: 1) . ລະດັບບັນຫາການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ທີ່ ເມືອງ ໂພນທອງ ແຂວງຫຼວງພະບາງ ແລະ 2) ປັດໄຈທີ່ເປັນບັນຫາຕໍ່ການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ທີ່ ເມືອງ ວຽງຄຳ ແຂວງ ຫຼວງພະບາງ. ກຸ່ມຕົວຢ່າງທີ່ໃຊ້ເຂົ້າໃນການຄົ້ນຄວ້າຄັ້ງນີ້ ແມ່ນນັກຮຽນຊັ້ນປະຖົມສຶກສາ ທີ່ ເມືອງໂພນທອງ ແຂວງຫຼວງພະບາງ ຈຳນວນ 25 ໂຮງຮຽນ ເທົ່າກັບ 535 ຄົນ. ເຄື່ອງມືທີ່ໃຊ້ເຂົ້າໃນການຄົ້ນຄວ້າ ແມ່ນແບບສອບຖາມ ແລະ ການວິເຄາະຂໍ້ມູນ ແມ່ນວິເຄາະຂໍ້ມູນແບບໃຊ້ສະຖິຕິພັນລະນາ ດ້ວຍການນຳໃຊ້ Program SPSS ແລະ ການວິເຄາະແບບໃຊ້ສະຖິຕິອະນຸມານ (Inferential Statistics) ເພື່ອວິເຄາະການຖົດຖອຍແບບພະຫຸຄູນ (Multiple Regression Analysis) ດ້ວຍ Program MATLAB.

ຜົນການຄົ້ນຄວ້າ ພົບວ່າ ລະດັບບັນຫາຕໍ່ການຮຽນ ຂອງນັກຮຽນຊັ້ນປະຖົມສຶກສາ ປ.3 - ປ.5 ທີ່ ເມືອງໂພນທອງ ແຂວງຫຼວງພະບາງ ໂດຍລວມແລ້ວ ແມ່ນມີບັນຫາຕໍ່ການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ໃນລະດັບປານກາງ ເຊັ່ນວ່າ ບຸກຄະລິກກະພາບຂອງນັກຮຽນ, ນິດໄສທາງການຮຽນ, ຄວາມເອົາໃຈໃສ່ຕໍ່ການຮຽນຂອງຜູ້ປົກຄອງ, ສະຖານທີ່ຕັ້ງຂອງໂຮງຮຽນ, ການພົວພັນລະຫວ່າງ ນັກຮຽນ ກັບ ໝູ່ເພື່ອນໃນຫ້ອງ, ການພົວພັນລະຫວ່າງ ນັກຮຽນ ກັບ ຄູ ແລະ ການປະພຶດຂອງຄູຕໍ່ກັບນັກຮຽນ ລ້ວນແລ້ວແຕ່ມີລະດັບຄວາມສຳຄັນຂອງບັນຫາຢູ່ໃນລະດັບປານກາງ. ສະນັ້ນ, ປັດໄຈທີ່ເປັນບັນຫາຕໍ່ການຮຽນຂອງນັກຮຽນ ຊັ້ນປະຖົມສຶກສາ ຫຼາຍທີ່ສຸດ ໄດ້ແກ່ ປັດໄຈດ້ານຄວາມເອົາໃຈໃສ່ຂອງຜູ້ປົກຄອງຕໍ່ການຮຽນຂອງນັກຮຽນ, ປັດໄຈດ້ານການປະພຶດຂອງຄູຕໍ່ກັບນັກຮຽນ, ປັດໄຈດ້ານນິດໄສທາງການຮຽນຂອງນັກຮຽນ, ປັດໄຈດ້ານສະຖານທີ່ຕັ້ງຂອງໂຮງຮຽນ, ປັດໄຈດ້ານການພົວພັນລະຫວ່າງນັກຮຽນ ກັບ ຄູ, ປັດໄຈດ້ານການພົວພັນລະຫວ່າງນັກຮຽນ ກັບ ໝູ່ເພື່ອນໃນຫ້ອງຮຽນ ແລະ ສຸດທ້າຍແມ່ນ ປັດໄຈດ້ານດ້ານບຸກຄະລິກກະພາບຂອງນັກຮຽນ ຕາມລຳດັບ.

**ຄຳສັບສຳຄັນ:** *ປັດໄຈທີ່ເປັນບັນຫາ, ບັນຫາການຮຽນຂອງນັກຮຽນ*

# Factors Influencing on Students’ Learning Problem at Primary School in Phonthong District, Luang Prabang Province

**Sommay Silivanh[1], Kinnaly Thipphaphone, Khamxay Chanhthahong, Saiphone Khotsaignoh, and Chanpheng Vongvilay**

*Research and Academic Service Office, Souphanouvong University, Lao PDR*

[1]***Correspondence:*** *Sommay Silivanh, Research and Academic Service Office, Souphanouvong University, Tel: +856 20 2235 0136, E-mail:* sommaysilivanh2017@gmail.com

*Faculty of Education, Souphanouvong University*

***Article Info:***

*Submitted: Jan 11, 2023*

*Revised: Mar 15, 2023*

*Accepted: Mar 27, 2023*

**Abstract**

This research focuses on factors as problems influencing student learning quality at primary school in Phonthong District, Luang Prabang province. The objective included 1) the level of importance of the problems to the student’s learning quality at primary school in Phonthong District, Luang Prabang province, and 2) factors as problems influencing student learning quality at primary school in Phonthong District, Luang Prabang province. The study was conducted with 25 primarry school and 535 primary students from grade 3 to grade 5. This quantitative research utilized questionnaires for data collection and the data were analyzed using the descriptive statistic by Program SPSS and inferential statistics by Program MATLAB.

The results that the condition of learning problems of primary school students in Grade 3 - Grade 5 in Phonthong District, Luang Prabang Province as a whole is a moderate level of problems such as student's personal, academic behavior, parents' attention to the student's education, the location of the school, the relationship between students and friends in the classroom, the relationship between the student and the teacher and the teacher's behavior towards the student as a whole are moderate level. So, the most problematic factors for primary school students are the parents' attention to the students' learning, the teacher's behavior towards the students, the student's learning habits, the school's location factor, the relationship between the students and the teacher, the relationship between the students and their friends in the class and finally the personality factors of the students respectively.

**Keywords:** *Factors influencing, Students’ learning problems*

## 1. ພາກສະເໜີ

ການສຶກສາໃນລະດັບຊັ້ນປະຖົມສຶກສາ ເປັນການສຶກສາທີ່ແນໃສ່ເຮັດໃຫ້ນັກຮຽນໃຫ້ມີຄວາມຮູ້ ຄວາມສາມາດຂັ້ນພື້ນຖານ ແລະ ສາມາດເນັ້ນໃຫ້ອ່ານອອກ, ຂຽນໄດ້, ຄິດຄຳນວນໄດ້, ມີຄວາມສາມາດປະກອບອາຊີບໃດໜຶ່ງໄດ້ຕາມຄວາມເໝາະສົມຂອງຄວາມຮູ້ ຄວາມສາມາດຕາມອາຍຸ ແລະ ການດຳລົງຊີວິດ, ຈຶ່ງມີຄວາມສຳຄັນ ແລະ ຈຳເປັນທີ່ສຸດ ເຊິ່ງສອດຄ່ອງກັບ 7 ຍຸດທະສາດລະດັບຊາດຂອງກອງປະຊຸມໃຫຍ່ຄັ້ງທີ X ຂອງ ພັກປະຊາຊົນປະຕິວັດລາວ ກ່ຽວກັບຍຸດທະສາດການພັດທະນາຊັບພະຍາກອນມະນຸດ ໂດຍເລັ່ງໃສ່ພັດທະນາຄົນໃຫ້ມີຄຸນສົມບັດສິນທຳປະຕິວັດ, ມີສະຕິປັນຍາ, ມີສຸຂະພາບ ແລະ ຮ່າງກາຍແຂງ

ແຮງ ດ້ວຍການສຶກສາອົບ ຮົມທາງດ້ານແນວຄິດການເມືອງ , ການຄຸ້ມຄອງກໍ່ສ້າງພະນັກງານ, ການປັບປຸງ ແລະ ປະຕິຮູບລະບົບການສຶກສາ. ນອກຈາກນັ້ນ, ຍັງໄດ້ປັບປຸງ ແລະ ຂະຫຍາຍການສຶກສາ ແລະ ກິລາຢ່າງມີຈຸດສຸມ ໄປຕາມຂອບມາດຕະຖານຄຸນນະພາບການສຶກສາແຫ່ງຊາດ, ຊຸກຍູ້, ສົ່ງເສີມປະຊາຊົນບັນດາເຜົ່າໄດ້ເຂົ້າເຖິງການສຶກສາ ແລະ ກິລາ ຕາມເງື່ອນໄຂ ແລະ ປະຕິບັດການສຶກສາປະຖົມພາກບັງຄັບໂດຍຈັດເປັນບູລິມະສິດໃຫ້ເຂດຊົນນະບົດ ຫ່າງໄກສອກຫຼີກ ແລະ ບ້ານ 3 ສ້າງ (ກະຊວງສຶກທິການ ແລະ ກິລາ, 2016).

ເມືອງໂພນທອງ ເປັນເຂດທີ່ໝັ້ນຂອງການປະຕິວັດຊາດໃນເມືອກ່ອນ ແລະໄດ້ຮັບການສ້າງຕັ້ງຂຶ້ນໃນຄັ້ງວັນທີ 11 ກັນຍາ (09) ປີ 2009 ຕັ້ງຢູ່ທາງທິດຕາເວັນອອກສ່ຽງເໜືອຂອງ ແຂວງຫຼວງພະບາງ ມີເນື້ອທີ່ທັງໝົດ 2.041,87 ກມ$^2$. ເມືອງໂພນທອງ ຫ່າງຈາກເທດສະບານ ແຂວງຫຼວງພະບາງ ປະມານ 232 ກມ (ຫ້ອງການສຶກສາທິການ ແລະ ກິລາ ເມືອງ ໂພນທອງ, 2020).

ການຮຽນໃນລະດັບຊັ້ນປະຖົມ ຖືວ່າເປັນຮາກຖານສໍາຄັນຂອງການພັດທະນາບຸກຄະລາກອນໃນຊາດ ອັນນໍາໄປສູ່ການພັດທະນາປະເທດໃຫ້ຈະເລີນກ້າວໜ້າຕໍ່ໄປໃນອານາຄົດ. ດັ່ງນັ້ນ, ການສົ່ງເສີມພັດທະນາການທາງດ້ານຮ່າງກາຍ, ສະຕິປັນຍາ, ອາລົມ ແລະ ສັງຄົມ ຕະຫຼອດຮອດການພັດທະນາບຸກຄະລິກຄະພາບຂອງນັກຮຽນຊັ້ນປະຖົມຈຶ່ງມີຄວາມສໍາຄັນ ແລະ ຈໍາເປັນ ນັບໄດ້ວ່າເປັນການຮຽນທີ່ສໍາຄັນຢ່າງຍິ່ງຕໍ່ພົນລະເມືອງສ່ວນໃຫຍ່ຂອງປະເທດ. ບັນຫາທີ່ເກີດຂຶ້ນນັ້ນ ແນ່ນອນວ່າຕ້ອງມີຜົນກະທົບຕໍ່ພັດທະນາການທຸກໆດ້ານຂອງນັກຮຽນ ແລະ ເປັນຮາກຖານໄປສູ່ບັນຫາໃນໄວຮຸ່ນ ແລະ ບັນຫາທີ່ປະກົດຂຶ້ນຢ່າງເຫັນໄດ້ຊັດເຈນທີ່ສຸດໃນກຸ່ມໄວຮຸ່ນນັ້ນ ຖ້າເຮົາມາພິຈາລະນາໃຫ້ເລິກເຊິ່ງ ຈະພົບວ່າ ສ່ວນໃຫຍ່ມີຮາກຖານມາຕັ້ງແຕ່ນ້ອຍ ຫຼື ເດັກນັກຮຽນໃນຊັ້ນປະຖົມນັ້ນເອງ (Klaewkla, 2011). ສະນັ້ນ, ຈຶ່ງສະຫຼຸບໄດ້ວ່າ ຖ້າການຮຽນໃນຂັ້ນພື້ນຖານຂອງນັກຮຽນຊັ້ນປະຖົມສຶກສາ ບໍ່ໄດ້ຮັບປະສິດທິພາບດີເທົ່າທີ່ຄວນນັ້ນ ກໍ່ຈະສົ່ງຜົນຕໍ່ເນື່ອງມາຮອດຊັ້ນມັດທະຍົມຕອນຕົ້ນ, ມັດທະຍົມຕອນປາຍ ແລະ ຕໍ່ຍອດມາຮອດການສຶກສາໃນລະດັບວິຊາຊີບໄດ້ ໂດຍສະເພາະແມ່ນວິຊາຊີບຄູ ເພາະຄູເປັນຜູ້ສ້າງຄົນ ແລະ ຄົນເປັນຜູ້ສ້າງສາພັດທະນາປະເທດຊາດ ເຊິ່ງເຫັນໄດ້ຈາກຜົນການສໍາຫຼວດຂໍ້ມູນເບື້ອງຕົ້ນ ໃນການເຮັດບົດໂຄງການຄົ້ນຄວ້າວິໄຈຂອງທີມງານຄົ້ນຄວ້າຈາກ ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ ແລະ ວິທະຍາໄລຄູ ຫຼວງພະບາງ ໄດ້ສຶກສາໃນຫົວຂໍ້ທີ່ວ່າ ສຶກສາປັດໃຈທີ່ສົ່ງຜົນຕໍ່ຄວາມຮູ້ພື້ນຖານໃນວິຊາຄະນິດສາດ ແລະ ວິຊາພາສາລາວ ຂອງນັກສຶກສາຄູປະຖົມ ປີທີ 1 ທີ່ ວິທະຍາໄລຄູ ຫຼວງພະບາງ ໃນສົກສຶກສາ 2017 - 2018 ດ້ວຍການທົດສອບ ນັກສຶກສາທັງໝົດ 29 ຄົນ ພົບວ່າ ຈໍານວນນັກສຶກສາທີ່ຕອບຖືກ ໃນວິຊາຄະນິດສາດຂັ້ນພື້ນຖານ ເທົ່າກັບ 35%, ຕອບຜິດ ເທົ່າກັບ 65%, ວິຊາພາສາລາວ ຕອບຖືກ ເທົ່າກັບ 43% ແລະ ຕອບຜິດເທົ່າກັບ 57% (Silivanh, 2019). ສະນັ້ນ, ຈຶ່ງເຫັນໄດ້ວ່າ ຜູ້ທີ່ມາສຶກສາຕໍ່ໃນສາຍຄູ ຍັງຂາດຄວາມຮູ້ພື້ນຖານກວມອັດຕາສ່ວນສູງຫຼາຍ ເຊິ່ງຈະກໍ່ໃຫ້ເກີດບັນຫາຫຼາຍຢ່າງຕາມມາຢ່າງແນ່ນອນ ເມື່ອສໍາເລັດການສຶກສາແລ້ວ ໄປປະກອບອາຊີບຄູໃນອະນາຄົດ.

ດ້ວຍເຫດຜົນ ແລະ ບັນຫາທັງໝົດທີ່ໄດ້ກ່າວມາຂ້າງເທິງນັ້ນ ແລະ ເພື່ອປະຕິບັດຕາມ 7 ຍຸດທະສາດລະດັບຊາດຂອງກອງປະຊຸມໃຫຍ່ຄັ້ງທີ X ຂອງ ພັກປະຊາຊົນປະຕິວັດລາວ ກ່ຽວກັບຍຸດທະສາດການພັດທະນາຊັບພະຍາກອນມະ ນຸດ, ເພື່ອປະຕິບັດຕາມຈຸດປະສົງ, ຄາດໝາຍ ແລະ ວຽກງານຈຸດສຸມຂອງ ກະຊວງສຶກສາທິການ ແລະ ກິລາ ໃຫ້ປາ ກົດຜົນເປັນຈິງນັ້ນ ທີມງານຄົ້ນຄວ້າວິໄຈ ຈຶ່ງມີຄວາມສົນໃຈຢາກຈະສຶກສາ ປັດໄຈທີ່ເປັນບັນຫາຕໍ່ການຮຽນຂອງນັກ ຮຽນຊັ້ນປະຖົມສຶກສາ ທີ່ ເມືອງໂພນທອງ ແຂວງ ຫຼວງພະບາງ ເຊິ່ງເປັນ 1 ໃນ 4 ເມືອງທຸກຍາກ ຂອງ ແຂວງຫຼວງພະບາງ ວ່າມີປັດໄຈອັນໃດແດ່ທີ່ເປັນບັນຫາ ເພື່ອຈະໄດ້ນໍາເອົາຜົນຂອງການສຶກສາຄົ້ນຄວ້າຄັ້ງນີ້ ໄປຜັນຂະຫຍາຍເຂົ້າໃນການປັບປຸງ ແກ້ໄຂ ແລະ ພັດທະນາການຮຽນຂອງ

ນັກຮຽນຊັ້ນປະຖົມໃຫ້ມີຄຸນນະພາບທີ່ດີຂຶ້ນກວ່າເກົ່າ ແລະ ກ້າວທັນກັບສາກົນຢ່າງແທ້ຈິງ.

ໂດຍມີຈຸດປະສົງການຄົ້ນຄວ້າແມ່ນ 1). ລະດັບບັນຫາການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ທີ່ ເມືອງໂພນທອງ ແຂວງຫຼວງພະບາງ ແລະ 2) ປັດໄຈທີ່ເປັນບັນຫາຕໍ່ການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ທີ່ ເມືອງວຽງຄໍາ ແຂວງຫຼວງພະບາງ.

## 2. ອຸປະກອນ ແລະ ວິທີການການ

### 2.1 ວິທີການ

ການຄົ້ນຄວ້າຄັ້ງນີ້ ແມ່ນຄົ້ນຄວ້າແບບປະລິມານ ໂດຍນໍາໃຊ້ແບບສອບຖາມ ເພື່ອເກັບຂໍ້ມູນຈິງກັບນັກຮຽນຊັ້ນປະຖົມສຶກສາ ທີ່ ເມືອງໂພນທອງ ແຂວງຫຼວງພະບາງ.

### 2.2 ກຸ່ມຕົວຢ່າງ

ກຸ່ມຕົວຢ່າງທີ່ໃຊ້ເຂົ້າໃນການຄົ້ນຄວ້າຄັ້ງນີ້ ແມ່ນນັກຮຽນຊັ້ນປະຖົມສຶກສາແຕ່ ປ.3 - ປ.5 ທັງໝົດ 25 ໂຮງຮຽນ ໃນນັ້ນ ມີໂຮງຮຽນມູນປະຖົມ ຈໍານວນ 3 ໂຮງຮຽນ ລວມມີນັກຮຽນທັງໝົດ 535 ຄົນ ຍິງ 267 ຄົນ. ໂດຍໃຊ້ວິທີການເລືອກແບບເຈາະຈົງ.

### 2.3 ເຄື່ອງມືທີ່ໃຊ້ເຂົ້າໃນການຄົ້ນຄວ້າ

ເຄື່ອງມືທີ່ໃຊ້ເຂົ້າໃນການຄົ້ນຄວ້າຄັ້ງນີ້ ແມ່ນແບບຟອມສອບຖາມ (Questionnaires) ສໍາລັບນັກຮຽນ ກ່ຽວກັບ ປັດໃຈທີ່ສົ່ງຜົນຕໍ່ບັນຫາການຮຽນຂອງນັກຮຽນຊັ້ນປະຖົມແຕ່ ປ.3 - ປ.5 ໂດຍແບ່ງເປັນດ້ານ ດັ່ງນີ້:

ດ້ານທີ 1: ເປັນແບບສອບຖາມກ່ຽວກັບ ບຸກຄະລິກຄະພາບຂອງນັກຮຽນ

ດ້ານທີ 2: ເປັນແບບສອບຖາມກ່ຽວກັບ ນິດໄສທາງດ້ານການຮຽນຂອງນັກຮຽນ

ດ້ານທີ 3: ເປັນແບບສອບຖາມກ່ຽວກັບ ຄວາມເອົາໃຈໃສ່ຕໍ່ການຮຽນຂອງຜູ້ປົກຄອງ

ດ້ານທີ 4: ເປັນແບບສອບຖາມກ່ຽວກັບ ສະຖານທີ່ຕັ້ງຂອງໂຮງຮຽນ

ດ້ານທີ 5: ເປັນແບບສອບຖາມກ່ຽວກັບ ການພົວພັນລະຫວ່າງນັກຮຽນ ກັບ ໝູ່ເພື່ອນໃນຫ້ອງຮຽນ

ດ້ານທີ 6: ເປັນແບບສອບຖາມກ່ຽວກັບ ການພົວພັນລະຫວ່າງ ນັກຮຽນ ກັບ ຄູ

ດ້ານທີ 7: ເປັນແບບສອບຖາມກ່ຽວກັບ ການປະພຶດຂອງຄູຕໍ່ກັບນັກຮຽນ

ດ້ານທີ 8: ບັນຫາການຮຽນຂອງນັກຮຽນ

ແບບສອບຖາມ ມີລັກສະນະເປັນແບບມາດຕາສ່ວນປະເມີນຄ່າ (Rating Scale) 5 ລະດັບ ຕາມແນວຄວາມຄິດຂອງ (Likert Scale Type).

### 2.4 ການຫາຄຸນນະພາບຂອງເຄື່ອງມື

ນໍາຜົນການປະເມີນແບບສອບຖາມຈາກຜູ້ຊ່ຽວຊານມາຄິດໄລ່ຫາຄ່າຄວາມທ່ຽງຕົງຕາມເນື້ອໃນກັບຈຸດປະສົງ ແລະ ທຽບກັບເກນ ແບບສອບຖາມທີ່ໃຊ້ໄດ້ຕ້ອງມີຄ່າ IOC (Index of Item Objective Congruence: IOC) ຕັ້ງແຕ່ 50.0 - 1.00 ຈຶ່ງຖືວ່າ ແບບສອບຖາມນີ້ ສາມາດໄປທົດລອງໃຊ້ໄດ້ (Polit & Beck, 2006) ແຕ່ຕ້ອງໄດ້ປັບປຸງຕາມຄໍາແນະນໍາຂອງຜູ້ຊ່ຽວຊານ ເພື່ອໃຫ້ໄດ້ແບບສອບຖາມທີ່ດີ, ເຊິ່ງໂດຍລວມແລ້ວ ມີຄ່າ IOC = 0.73 ເຊິ່ງສາມາດນໍາໄປໃຊ້ເກັບຂໍ້ມູນຈິງໄດ້.

### 2.5 ການວິເຄາະຂໍ້ມູນ

1.) ການວິເຄາະຂໍ້ມູນແບບໃຊ້ສະຖິຕິພັນລະນາ (Descriptive Statistics) ດ້ວຍການຫາຄ່າຄວາມຖີ່ (Freqency), ຄ່າສ່ວນຮ້ອຍ (Percentage), ຄ່າສະເລ່ຍ (Mean) ແລະ ຄ່າຜົນບ່ຽງມາດຖານ (Standard Division) ແລະ ອະທິບາຍຜົນໂດຍຂໍ້ຄວາມປະກອບຕາຕະລາງ (Explain the results by tables) ດ້ວຍການນໍາໃຊ້ Program SPSS ຊ່ວຍໃນການວິເຄາະ.

2.) ການວິເຄາະແບບໃຊ້ສະຖິຕິອະນຸມານ (Inferential Statistics) ໄດ້ແກ່ ບັນດາຄ່າທີ່ກ່ຽວຂ້ອງກັບການອະທິບາຍຜົນການວິເຄາະໃນຮູບແບບ ການວິເຄາະຫາການຖົດຖອຍແບບພະຫຸຄູນ (multiple regression analysis) ເຊັ່ນ ຄ່າ r ຄ່າສໍາປະສິດ (correlation coefficient) ແມ່ນສໍາປະສິດສະຫະສໍາພັນ, $R^2$ ແມ່ນສໍາປະສິດຄວາມສໍາພັນ (ຫຼື ສໍາປະສິດການພົວພັນ), $P$ ແມ່ນ

ຄ່າກະຕວງລະດັບຄວາມສຳພັນ (ຫຼື ຄ່າກະຕ່ວງຄວາມຜິດພາດ), $F$ ແມ່ນຄວາມຊັດເຈນຂອງລະດັບຄວາມສຳພັນດ້ວຍການນຳໃຊ້ Program MATLAB (Silivanh, 2016)

**ໝາຍເຫດ:**

- ເມື່ອຄ່າຂອງ $R^2$, $F$ ໃຫຍ່ເທົ່າໃດ ແລະ ຄ່າຂອງ $P$ ນ້ອຍເທົ່າໃດ ແບບຈຳລອງສົມຜົນການຖົດຖອຍຈະມີຄວາມຊັດເຈນເທົ່ານັ້ນ, ກໍລະນີກົງກັນຂ້າມເມື່ອຄ່າຂອງ $R^2$, $F$ ນ້ອຍເທົ່າໃດ ແລະ ຄ່າຂອງ $P$ ໃຫຍ່ເທົ່າໃດ ແບບຈຳລອງສົມຜົນການຖົດຖອຍຈະບໍ່ມີຄວາມຊັດເຈນຫຼາຍເທົ່ານັ້ນ.
- ເມື່ອບໍ່ມີ $\alpha$ ໃນຄຳສັ່ງແມ່ນຄຳສັ່ງຈະຖືເອົາຄ່າ $\alpha = 0.01$ (ລະດັບຄວາມສຳຄັນ $\alpha = 0.01$ ຫຼື ເວົ້າວ່າດ້ວຍລະດັບຄວາມເຊື່ອໝັ້ນ 99%).
- ເມື່ອໃຫ້ຄ່າຂອງ $\alpha$ ນ້ອຍລົງເທົ່າໃດ ຈະເຮັດໃຫ້ລະດັບຄວາມເຊື່ອໝັ້ນຍິ່ງໃຫຍ່ຂຶ້ນເທົ່ານັ້ນ.

(Chanthaphone, 2015)

## 3. ຜົນໄດ້ຮັບ

### 3.1 ຂໍ້ມູນສ່ວນຕົວຂອງນັກຮຽນ

ນັກຮຽນຊັ້ນປະຖົມສຶກສາ ມີເພດຍິງ ຈຳນວນ 267 ຄົນ ເທົ່າກັບ 49.00% ແລະ ເພດຊາຍ ມີ 268 ຄົນ ເທົ່າກັບ 50.10%. ສ່ວນຫຼາຍແມ່ນມີອາຍຸລະຫວ່າງ 9-10 ປີ ຈຳນວນ 255 ຄົນ ເທົ່າກັບ 47.70%, ຕໍ່ມາແມ່ນມີອາຍຸລະຫວ່າງ 11-13 ປີ ມີຈຳນວນ 204 ຄົນ ເທົ່າກັບ 38.10% ແລະ ອາຍຸລະຫວ່າງ 6-8 ປີ ມີຈຳນວນ 76 ຄົນ ເທົ່າກັບ 14.20%. ສ່ວນຫຼາຍແມ່ນຊົນເຜົ່າມົ້ງ ມີຈຳນວນ 278 ຄົນ ເທົ່າກັບ 52.00%, ຕໍ່ມາແມ່ນຊົນເຜົ່າກຶມມຸ ມີຈຳນວນ 169 ຄົນ ເທົ່າກັບ 31.60% ແລະ ຊົນເຜົ່າລາວລຸ່ມ ມີຈຳນວນ 88 ຄົນ ເທົ່າກັບ 16.40%.

### 3.2 ຂໍ້ມູນລະດັບບັນຫາການຮຽນຂອງນັກຮຽນຊັ້ນປະຖົມສຶກສາ

ໂດຍລວມແລ້ວ ລະດັບບັນຫາການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ປ.3-ປ.5 ທີ່ ເມືອງໂພນທອງ ແຂວງຫຼວງພະບາງ ແມ່ນມີບັນຫາໃນລະດັບປານກາງ ມີ $\overline{X} = 2.93;\ SD = 0.91$, ເມື່ອພິຈາລະນາເປັນແຕ່ລະດ້ານເຫັນວ່າ ນັກຮຽນມີບຸກຄະລິກຄະພາບທີ່ດີໃນລະດັບປານກາງ $\overline{X} = 2.99;\ SD = 0.94$, ມີນິດໄສທາງການຮຽນ ໃນລະດັບປານກາງ ມີ $\overline{X} = 2.81; SD = 0.98$, ຄວາມເອົາໃຈໃສ່ຕໍ່ການຮຽນຂອງຜູ້ປົກຄອງ ຢູ່ໃນລະດັບປານກາງ ມີ $\overline{X} = 2.83; SD = 0.83$, ສະຖານທີ່ຕັ້ງຂອງໂຮງຮຽນ ແມ່ນພໍໃຊ້ໄດ້ ມີ $\overline{X} = 3.17;\ SD = 0.80$, ມີການພົວພັນລະຫວ່າງ ນັກຮຽນ ກັບ ໝູ່ເພື່ອນໃນຫ້ອງ $\overline{X} = 2.80;\ SD = 0.97$, ການພົວພັນລະຫວ່າງ ນັກຮຽນ ກັບ ຄູ ຢູ່ໃນລະດັບປານກາງ ມີ $\overline{X} = 2.92; SD = 0.98$ ແລະ ການປະພຶດຂອງຄູ ຕໍ່ກັບນັກຮຽນ ແມ່ນຢູ່ໃນລະດັບປານກາງ ມີ $\overline{X} = 2.84; SD = 0.95$.

### 3.2 ປັດໄຈທີ່ເປັນບັນຫາຕໍ່ການຮຽນຂອງນັກຮຽນຊັ້ນປະຖົມສຶກສາ

ປັດໄຈທີ່ເປັນບັນຫາຕໍ່ການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ທີ່ ເມືອງ ວຽງຄຳ ແຂວງ ຫຼວງພະບາງ ພົບວ່າເມື່ອເຮົາເລືອກໄດ້ຕົວປ່ຽນ ທີ່ສາມາດອະທິບາຍຜົນ ບັນຫາການຮຽນຂອງນັກຮຽນ ແມ່ນ

$$W = 0.4600 + 0.2266X_3 + 0.2147X_7 + 0.2100X_2 + 0.1625X_4 + 0.0722X_6 + 0.0462X_5 - 0.0756X_1$$

ສະນັ້ນ, ຈິ່ງເຫັນໄດ້ວ່າ ມີ 7 ປັດໄຈ ທີ່ສາມາດອະທິບາຍຜົນ ບັນຫາການຮຽນ ຂອງນັກຮຽນຊັ້ນປະຖົມ ເຊິ່ງໄດ້ແກ່ປັດໄຈດ້ານຄວາມເອົາໃຈໃສ່ຂອງຜູ້ປົກຄອງຕໍ່ການຮຽນຂອງນັກຮຽນ ($X_3$), ຕໍ່ມາແມ່ນ ປັດໄຈດ້ານການປະພຶດຂອງຄູຕໍ່ກັບນັກຮຽນ ($X_7$), ປັດໄຈດ້ານນິດໄສທາງການຮຽນຂອງນັກຮຽນ ($X_2$), ປັດໄຈດ້ານສະຖານທີ່ຕັ້ງຂອງໂຮງ ຮຽນ ($X_4$), ປັດໄຈດ້ານການພົວພັນລະຫວ່າງ ນັກຮຽນກັບ ຄູ ($X_6$), ປັດໄຈດ້ານການພົວພັນລະຫວ່າງນັກຮຽນ ກັບໝູ່ເພື່ອນໃນຫ້ອງຮຽນ ($X_5$) ແລະ ສຸດທ້າຍແມ່ນ ປັດໄຈດ້ານດ້ານບຸກຄະລິກຄະພາບຂອງນັກຮຽນ ($X_1$), ໝາຍຄວາມວ່າ ສາມາດອະທິບາຍປັດໄຈ ທີ່ເປັນບັນຫາຕໍ່ການຮຽນຂອງນັກ ຮຽນໄດ້ດ້ວຍຄ່າສຳປະສິດການພົວພັນ $(R^2)$ ເທົ່າກັບ 0.7416 ແລະ ມີຄ່າກະຕວງຂອງຄວາມຜິດ

ພາດ P = 0.0000 ຈຶ່ງມີຄວາມຊັດເຈນໃນການພະຍາກອນໄດ້ 74.16%.

## 4. ວິພາກຜົນ

ລະດັບບັນຫາການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ປ.3 - ປ.5 ທີ່ ເມືອງໂພນທອງ ແຂວງຫຼວງພະບາງ ໂດຍລວມແລ້ວ ແມ່ນມີບັນຫາໃນລະດັບປານກາງ ເມື່ອພິຈາລະນາເປັນແຕ່ລະດ້ານ ເຫັນວ່າ ນັກຮຽນມີບຸກຄະລິກຄະພາບ, ມີນິດໄສທາງການຮຽນ, ຄວາມເອົາໃຈໃສ່ຕໍ່ການຮຽນຂອງຜູ້ປົກຄອງ, ສະຖານທີ່ຕັ້ງຂອງໂຮງຮຽນ, ການພົວພັນລະຫວ່າງ ນັກຮຽນ ກັບ ໝູ່ເພື່ອນໃນຫ້ອງ, ການພົວພັນລະຫວ່າງ ນັກຮຽນ ກັບ ຄູ ແລະ ການປະພຶດຂອງຄູ ຕໍ່ກັບນັກຮຽນ ແມ່ນຢູ່ໃນລະດັບປານກາງ, ເຊິ່ງມີຄວາມແຕກຕ່າງ ແລະ ສອດຄ່ອງບາງດ້ານ ກັບການຄົ້ນຄວ້າຂອງ Silivanh et al., (2019) ທີ່ຄົ້ນຄວ້າກ່ຽວກັບ ປັດໄຈທີ່ເປັນບັນຫາຕໍ່ການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ທີ່ເມືອງວຽງຄຳ ແຂວງຫຼວງພະບາງ ເຊິ່ງຜົນການຄົ້ນຄວ້າ ພົບວ່າ ນັກຮຽນມີບຸກຄະລິກຄະພາບທີ່ດີ, ມີນິດໄສທາງການຮຽນ ຄວາມເອົາໃຈໃສ່ຕໍ່ການຮຽນຂອງຜູ້ປົກຄອງ ໃນລະດັບປານກາງ ແລະ ສະຖານທີ່ຕັ້ງຂອງໂຮງຮຽນ ແມ່ນພໍໃຊ້ໄດ້, ການພົວພັນລະຫວ່າງ ນັກຮຽນ ກັບ ໝູ່ເພື່ອໃນຫ້ອງ ແລະ ການພົວພັນລະຫວ່າງ ນັກຮຽນ ກັບ ຄູ ຢູ່ໃນລະດັບດີ ແລະ ມີບັນຫາການຮຽນປານກາງ.

ປັດໄຈທີ່ບັນຫາຕໍ່ການຮຽນຂອງນັກຮຽນ ຊັ້ນປະຖົມ ຫຼາຍທີ່ສຸດແມ່ນ ປັດໄຈດ້ານສະພາບແວດລ້ອມ, ຕໍ່ມາແມ່ນ ປັດໄຈດ້ານຄອບຄົວຂອງນັກຮຽນ ແລະ ປັດໄຈດ້ານສ່ວນຕົວຂອງນັກຮຽນ ຕາມລຳດັບ, ເນື່ອງຈາກ ພົບວ່າ ປັດໄຈທີ່ເປັນບັນຫາຕໍ່ການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ທີ່ສາມາດອະທິບາຍຜົນ ບັນຫາການຮຽນຂອງນັກຮຽນຊັ້ນປະຖົມ ເຊິ່ງໄດ້ແກ່ ປັດໄຈດ້ານຄວາມເອົາໃຈໃສ່ຂອງຜູ້ປົກຄອງຕໍ່ການຮຽນຂອງນັກຮຽນ, ປັດໄຈດ້ານການປະພຶດຂອງຄູຕໍ່ກັບນັກຮຽນ, ປັດໄຈດ້ານນິດໄສທາງການຮຽນຂອງນັກຮຽນ, ປັດໄຈດ້ານສະຖານທີ່ຕັ້ງຂອງໂຮງຮຽນ, ປັດໄຈດ້ານການພົວພັນລະຫວ່າງ ນັກຮຽນ ກັບ ຄູ, ປັດໄຈດ້ານການພົວພັນລະຫວ່າງນັກຮຽນ ກັບ ໝູ່ເພື່ອນໃນຫ້ອງຮຽນ ແລະ ສຸດທ້າຍແມ່ນ ປັດໄຈດ້ານດ້ານບຸກຄະລິກຄະພາບຂອງນັກຮຽນ, ເຊິ່ງຈາກການວິເຄາະຕົວປ່ຽນຍ່ອຍ ທີ່ສາມາດອະທິບາຍຜົນ ຂອງປັດໄຈດ້ານສ່ວນຕົວຂອງນັກຮຽນ, ປັດໄຈດ້ານຄອບຄົວຂອງນັກຮຽນ ແລະ ປັດໄຈດ້ານສະພາບແວດລ້ອມ ຂອງນັກຮຽນຊັ້ນປະຖົມສຶກສາ ທີ່ ເມືອງໂພນທອງ ແຂວງຫຼວງພະບາງ ພົບວ່າ:

1. ດ້ານນິດໄສທາງການຮຽນ ຂອງນັກຮຽນ ມີຜົນຕໍ່ປັດໄຈດ້ານສ່ວນຕົວຂອງນັກຮຽນ ເຊິ່ງສະແດງໃຫ້ເຫັນວ່ານັກຮຽນມັກຫຼິ້ນກັບໝູ່ເພື່ອນຈົນກາຍເວລາພັກຜ່ອນ ເຮັດໃຫ້ເຂົ້າຫ້ອງຮຽນຊັກຊ້າ, ບໍ່ມີສະມາທິໃນການອ່ານໜັງສື ແລະ ແກ້ບົດເຝິກຫັດ, ໃນຊົ່ວໂມງຮຽນບໍ່ມັກເອົາອຸປະກອນການຮຽນ ແລະ ຕຳລາຮຽນມາຄົບ ແລະ ບໍ່ມີການແບ່ງເວລາໃຫ້ຕົນເອງສຳລັບພັກຜ່ອນ ແລະ ເຮັດວຽກບ້ານ ແລະ ສອດຄ່ອງກັບການຄົ້ນຄວ້າຂອງ Klaewkla (2011) ໄດ້ຄົ້ນຄວ້າກ່ຽວກັບ ນິດໄສການຮຽນຂອງນັກຮຽນຊັ້ນທີ 4 ໂຮງຮຽນສາທິດມະຫາວິທະຍາໄລທຳມະສາດ ໂດຍຜົນການຄົ້ນຄວ້າພົບວ່າ ນັກຮຽນຊັ້ນທີ 4 ໂຮງຮຽນສາທິດມະຫາວິທະຍາໄລທຳມະສາດ ມີລັກສະນະນິດໄສການຮຽນໃນພາບລວມ ແລະ ນິດໄສໃນການຮຽນໂດຍທົ່ວໄປຢູ່ໃນລະດັບດີ ແຕ່ໃນນັ້ນ ດ້ານການແບ່ງເວລາ ຢູ່ໃນລະດັບຄວນປັບປຸງຄືນ.

2. ດ້ານບຸກຄະລິກຄະພາບ ຂອງນັກຮຽນ ເຫັນວ່ານັກຮຽນມັກເຮັດວຽກໄປເລື້ອຍໆ ໂດຍບໍ່ຄຳນຶງວ່າ ຈະສຳເລັດໃນເວລາໃດ, ເປັນຄົນທີ່ເຮັດວຽກດ້ວຍຄວາມຊັກຊ້າ, ເມື່ອເລີ່ມເຮັດສິ່ງໃດໜຶ່ງແລ້ວ ບໍ່ມັກເຮັດໃຫ້ສຳເລັດຢ່າງວ່ອງໄວ ແລະ ມັກເປັນຄົນໃຈຮ້ອນ ມັກໃຊ້ອາລົມໃນເວລາເຮັດວຽກ ດັ່ງທີ່ Chilanon (2014) ເວົ້າວ່າ ບຸກຄະລິກະພາບ ເປັນສ່ວນສຳຄັນຂອງຄົນເຮົາ ໃນການທີ່ຈະຊ່ວຍສົ່ງເສີມ ຫຼື ຂັດຂວາງຄວາມສຳເລັດໃນດ້ານຕ່າງໆ ບໍ່ວ່າຈະເປັນດ້ານການຮຽນ, ການເຮັດວຽກ, ການເຂົ້າສັງຄົມ. ເຖິງວ່າຄວາມຮູ້ຄວາມສາມາດ ຈະເປັນສິ່ງສາຄັນທີ່ສຸດໃນການເຮັດ

ວຽກ ແຕ່ນັ້ນກໍ່ບໍ່ແມ່ນທັງໝົດ ການຍອມຮັບຂອງຄົນໃນສັງຄົມນັ້ນ ຕ້ອງມີສ່ວນປະກອບທີ່ສໍາຄັນນັ້ນກໍ່ຄື ບຸກຄະລິກະພາບ; ດັ່ງນັ້ນ ບຸກຄະລິກະພາບ ຈຶ່ງເປັນປັດໄຈທີ່ສາຄັນໜຶ່ງ ທີ່ສົ່ງຜົນ ແລະ ກ່ຽວຂ້ອງກັບການປະສົບຜົນສໍາເລັດ.

3. ດ້ານຄວາມເອົາໃຈໃສ່ຂອງຜູ້ປົກຄອງຕໍ່ການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ເຫັນວ່າ ຜູ້ປົກຄອງບໍ່ຄ່ອຍໃຫ້ການສົ່ງເສີມດ້ານຄວາມສາມາດໃນການຮຽນເປັນພິເສດ, ຜູ້ປົກຄອງບໍ່ຄ່ອຍຮູ້ກ່ຽວກັບການຮຽນຂອງລູກເລີຍ, ຜູ້ປົກຄອງມັກຈະລໍາຄານເມື່ອນັກຮຽນປຶກສາເລື່ອງວຽກບ້ານ ແລະ ຜູ້ປົກຄອງບໍ່ເຄີຍຖາມວ່າ ມີວຽກບ້ານຫຼາຍໜ້ອຍຊໍ່າໃດ ດັ່ງທີ່ Soongprasit (2019) ເວົ້າວ່າ ຄອບຄົວເປັນປັດໄຈທີ່ສໍາຄັນຫຼາຍ ຫາກຕ້ອງການໃຫ້ເດັກມີລັກສະນະນິໄສເປັນແບບໃດ ຕ້ອງເລີ່ມຕົ້ນທີ່ຄອບຄົວເປັນອັນດັບທໍາອິດ ເພື່ອສຶກສາອົບຮົມເດັກໃຫ້ມີພື້ນຖານຈິດໃຈ ແລະ ນິດໄສທີ່ດີ ສາມາດດາເນີນຊີວິດຢູ່ໄດ້ໃນສັງຄົມຢ່າງມີຄວາມສຸກ ແລະ ເປັນປົກກະຕິ ເຊິ່ງບໍ່ເປັນບັນຫາໃຫ້ກັບສັງຄົມ, ພໍ່ແມ່ຈະເປັນພື້ນຖານຄົນສໍາຄັນໃຫ້ລູກ ຖ້າພໍ່ແມ່ເອົາໃຈໃສ່ລູກ ກໍ່ຈະສາມາດຄວບຄຸມລູກໄດ້ໂດຍອັດຕະໂນມັດ ພໍ່ແມ່ຕ້ອງມີຂອບເຂດທີ່ຊັດເຈນໃຫ້ກັບລູກ ຄຽງຄູ່ໄປກັບການໃຫ້ຄວາມຮັກ ເພື່ອການອົບຮົມສັ່ງສອນໃຫ້ລູກເປັນຄົນດີໃນສັງຄົມ.

4. ດ້ານສະພາບແວດລ້ອມ ຂອງນັກຮຽນຊັ້ນປະຖົມສຶກສາ ໂດຍລວມແລ້ວ ເຫັນວ່າ ມີປັດໄຈດ້ານການພົວພັນລະຫວ່າງນັກຮຽນ ກັບ ໝູ່ເພື່ອນໃນຫ້ອງຮຽນ, ຕໍ່ປັດໄຈດ້ານການພົວພັນລະຫວ່າງ ນັກຮຽນ ກັບ ຄູ ແລະ ປັດໄຈດ້ານສະຖານທີ່ຕັ້ງຂອງໂຮງຮຽນ ແມ່ນມີຜົນຕໍ່ດ້ານສະພາບແວດລ້ອມຂອງນັກຮຽນ ເຊັ່ນ: ດ້ານສະຖານທີ່ຕັ້ງຂອງໂຮງຮຽນ ພົບວ່າ ຫ້ອງຮຽນບໍ່ສະອາດ ແລະ ອາກາດຖ່າຍເທບໍ່ສະດວກ, ໂຕະ-ຕັ່ງໃຊ້ໃນຫ້ອງຮຽນບໍ່ພຽງພໍ, ໂຮງຮຽນບໍ່ມີເດີ່ນກິລາ ແລະ ອຸປະກອນເຄື່ອງຫຼິ້ນກິລາສໍາລັບນັກຮຽນ ແລະ ໂຮງຮຽນກໍ່ຕັ້ງຢູ່ຫ່າງໄກຈາກຕົວເມືອງ ດັ່ງທີ Keonoy (2017) ເວົ້າວ່າ ສະພາບແວດລ້ອມທາງການຮຽນ ແມ່ນສະພາວະຕ່າງໆທີ່ມີຜົນຕໍ່ການຮຽນຂອງນັກຮຽນ ບໍ່ວ່າຈະໂດຍທາງກົງ ແລະ ທາງອ້ອມ ທັງທີ່ເປັນຮູບປະທໍາ ແລະ ນາມມະທໍາ ເຊິ່ງໄດ້ແກ່: ໂຕະ, ຕັ່ງ, ວັດຖຸອຸປະກອນ, ສື່ການຮຽນ-ການສອນ ລວມທັງສິ່ງຕ່າງໆທີ່ຢູ່ຕາມທໍາມະຊາດ ອັນໄດ້ແກ່ຕົ້ນໄມ້, ພູມສັນຖານ, ພູມອາກາດທີ່ແວດລ້ອມໂຮງຮຽນ ຫຼື ສະຖານການສຶກສານັ້ນໆ ແລະ ຍັງສອດ ຄ່ອງກັບ ການຄົ້ນຄວ້າຂອງ Anekeya (2015) ທີ່ຜົນການຄົ້ນຄວ້າພົບວ່າ ຫ້ອງຮຽນແອອັດ, ຫ້ອງຮຽນບໍ່ພຽງພໍ ເປັນປັດໄຈໜຶ່ງທີ່ມີຜົນກະທົບຕໍ່ຄຸນນະພາບການຮຽນຂອງນັກ ຮຽນຊັ້ນປະຖົມ.

5. ດ້ານການພົວພັນລະຫວ່າງນັກຮຽນ ກັບໝູ່ເພື່ອນໃນຫ້ອງຮຽນ ພົບວ່າ ໃນເວລາເຮັດວຽກກຸ່ມ ບໍ່ໄດ້ໃຫ້ຄວາມຮ່ວມມືກັບໝູ່ເພື່ອນໄດ້ດີ, ບໍ່ມັກຊ່ວຍເຫຼືອໝູ່ເພື່ອນໃນຫ້ອງຮຽນ, ໝູ່ເພື່ອນໃນຫ້ອງບໍ່ມີຄວາມສົນໃຈເຊິ່ງກັນ ແລະ ກັນ ແລະ ໝູ່ເພື່ອນບໍ່ມີຄວາມສາມັກຄີ ໃນການເຮັດກິດຈະກໍາໃນຊັ້ນຮຽນ; ດ້ານການພົວພັນລະຫວ່າງນັກຮຽນ ກັບ ຄູ ພົບວ່າ ນັກຮຽນບໍ່ໃຫ້ຄວາມເຄົາລົບຕໍ່ຄູທັງຕໍ່ໜ້າ ແລະ ລັບຫຼັງ, ນັກຮຽນບໍ່ກ້າຖາມຄູເມື່ອບໍ່ເຂົ້າໃຈບົດຮຽນ, ນັກຮຽນບໍ່ຕັ້ງໃຈຮຽນໃນເວລາທີ່ຄູສອນ ແລະ ນັກຮຽນບໍ່ມີໂອກາດສະແດງຄວາມຄິດເຫັນກັບຄູ ດັ່ງທີ່ Phongprtra (2015) ເວົ້າວ່າ ເປັນຄວາມສໍາພັນລະຫວ່າງໝູ່ເພື່ອນ ທີ່ໝາຍເຖິງພຶດຕິກໍາຕອບໂຕ້ລະຫວ່າງບຸກຄົນ ເພື່ອຫາຄວາມຮູ້ຈັກກັນ ເພື່ອໃຫ້ໄດ້ມາເຊິ່ງຄວາມຮັກແພງ, ຄວາມເຂົ້າໃຈອັນດີຕໍ່ກັນ ອັນນໍາມາເຊິ່ງຄວາມກ່ຽວຂ້ອງລະຫວ່າງບຸກຄົນລວມທັງສັງຄົມ ເຮັດໃຫ້ເກີດການປັບຕົວທາງສັງຄົມ, ຍອມຮັບຄວາມແຕກຕ່າງລະຫວ່າງບຸກຄົນ ແລະ ເຄົາລົບສິດທິຜູ້ອື່ນ ຮູ້ຈັກໃຫ້ການຍອມຮັບ ແລະ ເພິ່ງພາອາໄສເຊິ່ງກັນ ແລະ ກັນ.

6. ດ້ານການປະພຶດຂອງຄູຕໍ່ກັບນັກຮຽນ ພົບວ່າ ຄູບໍ່ເປີດໂອກາດໃຫ້ນັກຮຽນມີສ່ວນຮ່ວມໃນເວລາຮຽນ, ຄູບໍ່ເຄີຍຊົມເຊີຍນັກຮຽນເມື່ອເຮັດໃນສິ່ງທີ່ດີ ແລະ ຖືກຕ້ອງ, ຄູບໍ່ຄ່ອຍສົນໃຈນັກຮຽນນອກຈາກເວລາຮຽນເທົ່ານັ້ນ ແລະ ຄູບໍ່ມັກພານັກຮຽນສ້າງບັນຍາກາດໃນເວລາຮຽນ ສອດຄ່ອງກັບການຄົ້ນຄວ້າຂອງ Lapho (2020) ໄດ້ຄົ້ນຄວ້າ

ກ່ຽວກັບ ພຶດຕິກຳການສອນຂອງຄູກັບການຮຽນຮູ້ຂອງຜູ້ຮຽນ ໃນນັ້ນມີຈຸດມຸ່ງໝາຍທີ່ຈະສະທ້ອນໃຫ້ເຫັນເຖິງຄວາມສຳຄັນຂອງພຶດຕິກຳການສອນຂອງຄູທີ່ດີ ທີ່ມີຕໍ່ການຮຽນຮູ້ຂອງຜູ້ຮຽນ, ການທີ່ຄູສອນສາມາດສ້າງສັດທາໃຫ້ເກີດກັບຜູ້ຮຽນໄດ້ ແນ່ນອນວ່າຈະງ່າຍແກ່ການປູກຈິດສຳນຶກທາງດ້ານຄວາມຮູ້ ຄວາມສາມາດຕໍ່ເນື້ອໃນວິຊາຮຽນໃຫ້ແກ່ຜູ້ຮຽນ. ດັ່ງນັ້ນ ຄູ ຫຼື ຜູ້ສອນ ຈຶ່ງຕ້ອງມີຈິດວິນຍານເປັນຄູຢ່າງແທ້ຈິງ ເພາະຄຸນສົມບັດດັ່ງກ່າວ ຈະສະທ້ອນອອກມາໃນພຶດຕິກຳການສອນຂອງຄູ ຕະຫຼອດຮອດທຸກບົດບາດຂອງການປະພຶດຂອງຄູດ້ວຍ ເຊິ່ງປະກອບດ້ວຍ 3 ປະເດັນຄື: ບຸກຄະລິກຄະພາບຂອງຄູ, ຄວາມຮອບຮູ້ຂອງຄູ ແລະ ພຶດຕິກຳການສອນຂອງຄູ. ຍັງສອດຄ່ອງກັບ Yaitoi (2016) ໄດ້ເວົ້າວ່າ ໃນການຈັດການຮຽນການສອນນັ້ນ ມີບຸກຄົນທີ່ສຳພັນກັນສອງຝ່າຍຄື ຄູ ແລະ ນັກຮຽນ, ພຶດຕິກຳການສອນຂອງຄູ ແລະ ພຶດຕິກຳການຮຽນຮູ້ ຈຶ່ງມີຄວາມກ່ຽວຂ້ອງກັນ ໂດຍສະເພາະພຶດຕິກຳການສອນຂອງຄູມີອິດທິພົນຕໍ່ການຮຽນຮູ້ ຫາກຄູເປັນຜູ້ມີຄວາມສາມາດໃນການຖ່າຍທອດປະສົບການສູ່ນັກຮຽນທີ່ດີໄດ້.

## 5. ສະຫຼຸບ

1. ລະດັບບັນຫາການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ປ.3 - ປ.5 ທີ່ ເມືອງໂພນທອງ ແຂວງຫຼວງພະບາງ ໂດຍລວມແລ້ວ ແມ່ນມີບັນຫາໃນລະດັບປານກາງ.

2. ປັດໄຈທີ່ບັນຫາຕໍ່ການຮຽນຂອງນັກຮຽນ ຊັ້ນປະຖົມສຶກສາ ຫຼາຍທີ່ສຸດ ໄດ້ແກ່ ປັດໄຈດ້ານຄວາມເອົາໃຈໃສ່ຂອງຜູ້ປົກຄອງຕໍ່ການຮຽນຂອງນັກຮຽນ, ປັດໄຈດ້ານການປະພຶດຂອງຄູຕໍ່ກັບນັກຮຽນ, ປັດໄຈດ້ານນິດໄສທາງການຮຽນຂອງນັກຮຽນ, ປັດໄຈດ້ານສະຖານທີ່ຕັ້ງຂອງໂຮງຮຽນ, ປັດໄຈດ້ານການພົວພັນລະຫວ່າງ ນັກຮຽນ ກັບຄູ, ປັດໄຈດ້ານການພົວພັນລະຫວ່າງນັກຮຽນ ກັບ ໝູ່ເພື່ອນໃນຫ້ອງຮຽນ ແລະ ສຸດທ້າຍແມ່ນ ປັດໄຈດ້ານດ້ານບຸກຄະລິກຄະພາບຂອງນັກຮຽນ ຕາມລຳດັບ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະ ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ຄຳຂອບໃຈ

ການຄົ້ນຄວ້າຄັ້ງນີ້ ໄດ້ຮັບທຶນສະໜັບສະໜູນການຄົ້ນຄວ້າວິທະຍາສາດ (CRF: Competitive Research Fund) ຈາກ ADB Grant No.0500 – Lao (SF): Second Strengthening Higher Education Project. ສະນັ້ນ, ທີມງານຄົ້ນຄວ້າ ພວກຂ້າພະເຈົ້າຂໍສະແດງຄວາມຮູ້ບຸນຄຸນ ແລະ ຂອບໃຈເປັນຢ່າງສູງມາຍັງ ກົມການສຶກສາຊັ້ນສູງ/ໂຄງການ SSHEP ກະຊວງສຶກສາທິການ ແລະ ກິລາ ທີ່ໄດ້ໃຫ້ໂອກາດ ແລະ ສະໜັບສະໜູນ ໃນການຄົ້ນ ຄວ້າຄັ້ງນີ້.

## 8. ເອກະສານອ້າງອີງ

ກະຊວງສຶກທິການ ແລະ ກິລາ. (2015). ວິໄສທັດ ຮອດປີ 2030 ຍຸດທະສາດ ຮອດປີ 2025 ແລະ ແຜນພັດທະ ນາຂະແໜງການສຶກສາ ແລະ ກິລາ 5 ປີ 2016 - 2020.

ກົດໝາຍ ວ່າດ້ວຍການສຶກສາຂອງ ສ ປ ປ ລາວ (ສະບັບປັບປຸງ). (2015). ນະຄອນຫຼວງວຽງຈັນ.

ຫ້ອງການສຶກສາທິການ ແລະ ກິລາ ເມືອງໂພນທອງ ແຂວງຫຼວງພະບາງ. (2020). ບົດສະຫຼຸບຈຳນວນຄູສອນ, ໂຮງຮຽນ ແລະ ນັກຮຽນ ເມືອງ ໂພນທອງ ສົກປີ 2020.

Anekeya, D. M. (2015). School Based Factors Affecting Quality of Education in Primary Schools in Kakamega North Sub County, Kenya. *International Journal of Recent Research in Social Sciences and Humanities (IJRRSSH)*. *2*(2), 45-58.

Chilanon, V. (2014). ความสำคัญของบุคลิกภาพ. Retrieved from: https://www.baanjomyut.

com/library_2/extension-1/introduction_to_personality/02.html
Keonoy, V. (2017). New Learning Environment. Retrieved from Education Technology and Communication : https://sites.google.com/site/winaik103/263-601/new-learning-environment
Klaewkla, S. (2011). Factors affecting on learning problems of the second level, primary grades 4-6 students at Watmetanggarawas School in Phrae Province, Thailand.
Lapho, J. (2020). Teaching behaviors of teachers and learning of students. Sakon NaKhon Rajabhat University, Thailand. Retrieved from https://so03.tci-thaijo.org/index.php/JMND/article/download/243125/164695/839934.
Moolsadang, S. (2007). A Study of the Study Habits of Fourth Level Students of The Demonstration School at Ramkhamhaeng University. Ramkhamhaeng Research Journal. 10(1), p. 71-82.
Phongprtra, S. (2015). Factors affecting social relationships among students. Bangkok: Srinakharinwirot University.
Phonrany Suxai. (1989). Teacher's behavior towards students
Polit, D. F., & Beck, C. T. (2006). The content validity index: are you sure you know what's being reported? critique and recommendations. Research in Nursing & Health, 29(5), 489-497.
Silivanh, S. (2016). Study Income of Tourism in Luang Prabang Province.
Silivanh, S., Vathanavong, T., Phewkhamphom, S., Inthavichit, P., Xang, Y., Duangchan, B., & Chanthaluck Chitthavone, C. (2019). Souphanouvong University Journal of Multidisciplinary Research and Development. 5(2), p. 127-137.
Soongprasit, M. (2019). อิทธิพลครอบครัว ที่ส่งผลต่อตัวเด็กโดยตรง. Retrieved from https://www. rama.mahidol.ac.th/ramachannel/home/article/
Chanthaphone, T. (2015). Mathematical modeling apply for study on factor affecting the EaringPower of Banque Poor le Commerce Exterieur Lao Public. A Thesis Submitted in Partial Fulfillment of the Requirements for the Degree of Master of Science, Majoring in Mathematics, Faculty of Natural Science.
Yaitoi, S. (2016). Associations between Students' Perceptions on Actual and Preferred Teacher Interpersonal Behaviors and their Attitudes toward Physics at the Tenth-Grade Level. Rajabhat Maha Sarakham University.
Zimbardo & Ruch . (2016). Personality. Retrieved from https://sites.google.com/: https://sites.google.com/site/personality009/bukhlikphaph.